ສປປ ລາວ

ລັດຖະບານແຫ່ງ ສປປ ລາວ ໄດ້ນຳໃຊ້ທຸກຄວາມພະຍາຍາມເພື່ອບັນລຸໄດ້ມາດຕະຖານຂັ້ນພື້ນຖານໃນການລຶບລ້າງບັນຫາການຄ້າມະນຸດ ແຕ່ເຖິງຢ່າງໃດ ກໍ່ຍັງຕ້ອງໄດ້ສຸມທຸກຄວາມພະຍາຍາມໃນການແກ້ໄຂບັນຫານີ້ຢ່າງຕໍ່ເນື່ອງ. ລັດຖະບານໄດ້ຍົກໃຫ້ເຫັນເຖິງຄວາມພະຍາຍາມໂດຍຜ່ານໄລຍະຂອງການສ້າງບົດລາຍງານທີ່ບອກໃຫ້ຮູ້ເຖິງການຝຶກອົບຮົມແກ່ບັນດາເຈົ້າໜ້າທີ່ຕຳຫຼວດຢູ່ຂັ້ນແຂວງ, ສ້າງຄວາມເຂັ້ມແຂງໃຫ້ບັນດາຂະບວນການເພື່ອກຳນົດໄດ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຢູ່ພາຍໃນ, ແລະ ລິເລີ່ມຂັ້ນຕອນການດຳເນີນຄະດີທີ່ກ່ຽວຂ້ອງກັບການຄ້າມະນຸດ. ເຖິງຢ່າງໃດກໍ່ຕາມ ລັດຖະບານອາດຍັງຕ້ອງໄດ້ເພີ່ມຄວາມພະຍາຍາມເຂົ້າຕື່ມເມື່ອທຽບໃສ່ໄລຍະການລາຍງານທີ່ຜ່ານມາ. ຄວາມພະຍາຍາມ ແລະ ການປະສານງານຂອງບັນດາກະຊວງທີ່ກ່ຽວຂ້ອງໃນການປ້ອງກັນການຄ້າມະນຸດອາດສາມາດຍົກລະດັບຂຶ້ນໄດ້. ລັດຖະບານນຳໃຊ້ວິທີໃນການລະບຸຕົວ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ອາດມີຈຸດອ່ອນຍ້ອນສາເຫດທີ່ອາດແມ່ນຄວາມສາມາດຂອງເຈົ້າໜ້າທີ່ເອງອາດຍັງຈຳກັດ ແລະ ອາດບໍ່ທັນສະໜອງທຶນຊຸກຍູ້ວຽກງານປ້ອງກັນໃຫ້ແກ່ຜູ້ຖືກເຄາະຮ້າຍ. ພາກລັດໄດ້ເອົາໃຈໃສ່ຕໍ່ການສ້າງແຜນແຕ່ຂອດປະຕິບັດອາດຍັງຈຳກັດ ຊຶ່ງຕ້ອງການຄວາມເອົາໃຈໃສ່ເພີ່ມຂຶ້ນເພື່ອບັນລຸບັນດາມາດຕະຖານຂັ້ນພື້ນຖານ. ປະເທດລາວໄດ້ຮັບສິດທິຂໍ້ຍົກເວັ້ນໃນກົດໝາຍວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຖ້າບໍ່ດັ່ງນັ້ນຈະຖືກຮຽກຮ້ອງໃຫ້ຫຼຸດສະຖານະພາບລົງຢູ່ໄລຍະທີສາມ (Tier3). ສະນັ້ນ, ປະເທດລາວຍັງຢູ່ໃນສະຖານະພາບຂອງໄລຍະທີສອງ (Tier2) ສຳລັບບັນຊີປະເທດເຝົ້າລະວັງ ເປັນເວລາສີ່ປີລຽນຕິດ.

**ບັນດາຄຳແນະນຳສຳລັບ ສປປ ລາວ:**

ຂໍໃຫ້ມີການປະສານງານກັບອົງການຈັດຕັ້ງທາງສັງຄົມໃນການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດ 2016-2020; ສ້າງຄວາມເຂັ້ມແຂງໃນການນຳໃຊ້ກົດໝາຍຕ້ານການຄ້າມະນຸດ ສະບັບປີ 2016 ໃຫ້ແກ່ເຈົ້າໜ້າທີ່ຮັບຜິດຊອບການສືບສວນສອບສວນ, ການດຳເນີນຄະດີ ແລະ ການປະຕິບັດໂທດກັບພວກຄ້າມະນຸດທີ່ກະທຳຜິດລວມທັງເຈົ້າໜ້າທີ່ໆສົມຮູ້ຮ່ວມຄິດ ແລະ ນັກທ່ອງທ່ຽວທີ່ຊອກຫາການມີເພດສຳພັນກັບເດັກນ້ອຍ; ເຜີຍແຜ່ຂໍ້ມູນຂ່າວສານ, ຈັດຕັ້ງປະຕິບັດ ແລະ ຝຶກອົບຮົມໃຫ້ເຈົ້າໜ້

າທີ່ຕຳຫຼວດ ແລະ ບັນດາເຈົ້າໜ້າທີ່ປະຈຳຢູ່ດ່ານຊາຍແດນໃຫ້ຮູ້ຂັ້ນຕອນທາງການໃນການລະບຸຕົວຜູ້ຖືກເຄາະຮ້າຍ ລວມທັງເຜີຍແຜ່ໃຫ້ບັນດາຊຸມຊົນໃນທ້ອງຖິ່ນ ແລະ ອາດມີຄວາມສ່ຽງຕໍ່ການຄ້າມະນຸດເຊັ່ນ: ແຮງງານເຄື່ອນຍ້າຍທີ່ບໍ່ມີເອກະສານເຮັດວຽກໃນເຂດເສດຖະກິດພິເສດ ຫຼື ສະເພາະ, ມີຜູ້ຊາຍ ແລະ ເດັກຊາຍທີ່ຖືກບັງຄັບໃຫ້ເຮັດວຽກໃນອຸດສາຫະກຳການປະມົງ, ເດັກນ້ອຍທີ່ເປັນແຮງງານຖືກບັງຄັບໃນຂະແໜງກະສິກຳ, ແລະ ແມ່ຍິງພ້ອມເດັກຍິງຕ່າງດ້າວທີ່ປະເຊີນບັນຫາການຖືກເນລະເທດ; ເພີ່ມງົບປະມານເຂົ້າພາກລາຍຈ່າຍທີ່ລັດໄດ້ຈັດສັນເຂົ້າໃນການຕ້ານການຄ້າມະນຸດ ເພື່ອຈັດຕັ້ງປະຕິບັດການໃຫ້ບໍລິການ ແລະ ແຜນງານຊຸກຍູ້ຜູ້ຖືກເຄາະຮ້າຍລວມທັງກົນໄກການໃຫ້ລາງວັນເພື່ອເປັນພະຍານ ຈາກບັນດາສານປະຊາຊົນ ແລະ ກົນໄກສ້າງສິ່ງກະຕຸກຊຸກຍູ້ໃຫ້ຜູ້ຖືກເຄາະຮ້າຍທີ່ເຂົ້າຮ່ວມຂະບວນການກົດໝາຍຢ່າງເປັນທາງການ, ແລະ ຂະຫຍາຍການບໍລິການນີ້ໃຫ້ກວມເອົາຜູ້ຖືກເຄາະຮ້າຍທີ່ເປັນເພດຊາຍ; ຊຸກຍູ້ການມີສ່ວນຮ່ວມຂອງອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດເພື່ອເພີ່ມຊັບພະຍາກອນ ແລະ ຝຶກອົບຮົມວິຊາຊີບເພື່ອຊ່ວຍຜູ້ຖືກເຄາະຮ້າຍລວມທັງຜູ້ຖືກເຄາະຮ້າຍທີ່ເປັນເພດຊາຍ ໃຫ້ເຂົາເຈົ້າສາມາດກັບຄືນສູ່ຊຸມຊົນບ້ານເກີດຂອງເຂົາເຈົ້າ; ປັບປຸງຄວາມໂປ່ງໃສໂດຍການເກັບກຳຂໍ້ມູນຂ່າວສານກ່ຽວກັບບັນດາກິດຈະກຳຂອງລັດໃນການຕ້ານການຄ້າມະນຸດເຊັ່ນ: ລາຍລະອຽດຂອງຄະດີ ແລະ ການຈັດສັນງົບປະມານ, ພ້ອມທັງການແບ່ງປັນຂໍ້ມູນຂ່າວສານນີ້ກັບບັນດາກະຊວງ ແລະ ອົງການທີ່ບໍ່ສັງກັດລັດ; ພິຈາລະນາການກຳນົດນິຕິກຳເພື່ອລົງໂທດບຸກຄົນທີ່ສົມຮູ້ຮ່ວມຄິດ ຫຼື ອຸປະຖຳຢ່າງມີເຈດຕະນາກັບການຄ້າມະນຸດ; ແລະ ເພີ່ມທະວີຄວາມພະຍາຍາມເຂົ້າໃນວຽກງານດ້ານການທູດຢູ່ສາກົນເພື່ອຊ່ວຍການລະບຸຕົວ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍ.

**ການດຳເນີນຄະດີ:**

ລັດຖະບານໄດ້ມີຄວາມພະຍາຍາມໃນການບັງຄັບໃຊ້ກົດໝາຍຢ່າງເຂັ້ມງວດ ໂດຍການປະກາດໃຊ້ກົດໝາຍຕ້ານການຄ້າມະນຸດໃນປີ 2015 ແລະ ເນື້ອໃນຂອງມາດຕາທີ 134 ໂດຍລວມແມ່ນຫ້າມທຸກຮູບການຂອງການຄ້າມະນຸດ ແລະ ອາທິບາຍການກຳນົດໂທດຈາກການຕັດອິດສະຫຼະພາບແຕ່ 5 ປີຮອດຕະຫຼອດຊີວິດ, ຄ່າປັບໃໝຈາກສິບລ້ານຮອດຮ້ອຍລ້ານກີບ (ປະມານ 1,224-12,240 ໂດລາສະຫະລັດ) ແລະ ການຮິບຊັບສິນຕ່າງໆ; ການກຳນົດໂທດດັ່ງກ່າວແມ່ນມີຄວາມເຂັ້ມງວດ ແລະ ມີ

ລະດັບທີ່ເທົ່າກັບຄະດີກະທຳຜິດທີ່ໜັກໜ່ວງອື່ນໆເຊັ່ນ: ການຂົ່ມຂືນ. ໃນປີ 2016 ເຈົ້າໜ້າທີ່ໄດ້ລາຍງານການສືບສວນສອບສວນ 37 ຄົນ ແລະ ດຳເນີນຄະດີໄດ້ຢ່າງໜ້ອຍ 11 ລາຍຄະດີກັບຜູ້ຖືກຫາໃນຄະດີການຄ້າມະນຸດ, ຊຶ່ງນຳໄປສູ່ການລົງໂທດຜູ້ຄ້າມະນຸດໄດ້ 7 ຄົນ. ມີ 41 ຄົນທີ່ຖືກສືບສວນ ແລະ ຈະມີ 9 ຄົນຖືກດຳເນີນຄະດີ ແລະ ອີກ 13 ຄົນແມ່ນກະທຳຜິດແທ້ໃນປີ 2015 ເມື່ອທຽບກັບ (ໃນປີ 2014 ມີການດຳເນີນຄະດີ 31 ລາຍຄະດີ ແລະ ມີຜູ້ກະທຳຜິດ 21 ຄົນ). ພາກລັດບໍ່ໄດ້ສະໜອງຂໍ້ມູນກ່ຽວກັບຄຳຕັດສິນຂອງສານຕໍ່ກັບບຸກຄົນທີ່ກະທຳຜິດ; ອົງການຈັດຕັ້ງສາກົນລາຍງານວ່າ: ໜຶ່ງໃນລາຍຄະດີພວມຢູ່ພາຍໃຕ້ຂັ້ນຕອນຂອງການອຸທອນ ໃນຊ່ວງເວລາສຸດທ້າຍຂອງໄລຍະການສ້າງບົດລາຍງານ. ພາກລັດບໍ່ໄດ້ສະໜອງຂໍ້ມູນກ່ຽວກັບການດຳເນີນຄະດີກັບຄົນຕ່າງປະເທດ ໃນ ສປປ ລາວ ຊຶ່ງເປັນຜູ້ທີ່ມີສ່ວນຮ່ວມໃນການທ່ອງທ່ຽວເພື່ອມີເພດສຳພັນກັບເດັກນ້ອຍ. ກະຊວງປ້ອງກັນຄວາມສະຫງົບໄດ້ຮ່ວມມືກັບກະຊວງການຕ່າງປະເທດ, ບັນດາກຸ່ມອົງການຈັດຕັ້ງທາງສັງຄົມທີ່ຢູ່ພາຍໃນເນັ້ນໜັກໃສ່ບັນຫາແມ່ຍິງ, ແລະ ຮ່ວມກັບອົງການຈັດຕັ້ງສາກົນເພື່ອປະສານກັບເຈົ້າໜ້າທີ່ພາຍໃນໃນການຕ້ານການຄ້າມະນຸດຢູ່ຂັ້ນແຂວງ ແລະ ເຜີຍແຜ່ຂໍ້ມູນຂ່າວສານໃຫ້ແກ່ເຈົ້າໜ້າທີ່ 174 ທ່ານໃຫ້ຮູ້ກ່ຽວກັບກົດໝາຍຕ້ານການຄ້າມະນຸດສະບັບປີ 2016. ກອງເລຂາໄດ້ແຕ່ງຕັ້ງອົງການໄອຍະການປະຊາຊົນສູງສຸດເພື່ອສ້າງຄູ່ມືການສືບສວນສອບສວນການຄ້າມະນຸດທີ່ກຳນົດແຈ້ງກ່ຽວກັບປະເພດຂອງການກະທຳຜິດ ແຕ່ຍັງບໍ່ຊັດເຈນວ່າ ວຽກດັ່ງກ່າວສຳເລັດແລ້ວຫຼືບໍ່ ຫຼື ເຈົ້າໜ້າທີ່ໄດ້ນຳໃຊ້ຄູ່ມືເຂົ້າໃນວຽກສືບສວນສອບສວນຂອງຕົນ. ເຈົ້າໜ້າທີ່ຍັງໄດ້ປະສານງານກັບປະເທດໄທໃນຂັ້ນຕອນການສືບສວນສອບສວນລວມທັງການສຳພາດຜູ້ຖືກເຄາະຮ້າຍ ແລະ ຕິດຕາມອາດສະຍາກຳ. ເຈົ້າໜ້າທີ່ຍັງໄດ້ພົບກັບຕຳຫຼວດຈີນ 9 ຄັ້ງເພື່ອການປະສານງານ ແລະ ຊ່ວຍແກ້ໄຂບັນຫາການຄ້າມະນຸດໄດ້ຫຼາຍ.

ບັນດາອົງການຕ້ານການຄ້າມະນຸດ ແລະ ສື່ມວນຊົນໄດ້ລາຍງານວ່າ ມີເຈົ້າໜ້າທີ່ຂັ້ນນ້ອຍ ອາດປະກອບສ່ວນເຂົ້າໃນການສ້າງຄວາມສ່ຽງຕໍ່ການເກີດການຄ້າມະນຸດ ຜ່ານການຮັບເອົາສິນບົນເພື່ອອຳນວຍຄວາມສະດວກໃຫ້ມີການເຄື່ອນຍ້າຍ ແລະ ການຂົນສົ່ງເດັກຍິງເຂົ້າໄປໃນປະເທດຈີນ. ຕໍ່ກັບບົດລາຍງານດັ່ງກ່າວ, ພາກລັດພັດບໍ່ໄດ້ລາຍງານການສືບສວນ, ການດຳເນີນຄະດີ ຫຼື ການລົງໂທດເຈົ້າໜ້າທີ່ໆສົມຮູ້ຮ່ວມຄິດໃນການຄ້າມະນຸດ ຫຼື ກິດຈະກຳທີ່ກ່ຽວຂ້ອງກັບການຄ້າມະນຸດໃນປີນັ້ນ.

## ການປົກປ້ອງ:

ພາກລັດອາດຍັງບໍ່ທັນມີການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ຄົບຖ້ວນເທື່ອ. ລັດຖະບານໄດ້ໝູນໃຊ້ກົນໄກການລິເລີ່ມການຕ້ານການຄ້າມະນຸດໃນກອບການປະສານງານລະດັບກະຊວງຂອງພາກພື້ນແມ່ນ້ຳຂອງ, ຂໍ້ກຳນົດທີ່ສົ່ງເສີມຂັ້ນຕອນການລະບຸຕົວ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ, ແລະ ໄດ້ສ້າງກົນໄກການສົ່ງຕໍ່ແຫ່ງຊາດຂຶ້ນອີງຕາມກົດໝາຍຕ້ານການຄ້າມະນຸດສະບັບປີ 2016. ຢ່າງໃດກໍ່ຕາມ, ພາກລັດອາດຍັງບໍ່ທັນໄດ້ຈັດຕັ້ງປະຕິບັດກົນໄກດັ່ງກ່າວ ຫຼື ບັນດາມາດຕະຖານທີ່ໄດ້ສ້າງຂຶ້ນຜ່ານມາເຂົ້າໃນການລະບຸຕົວຜູ້ຖືກເຄາະຮ້າຍໃນບັນດາກຸ່ມທີ່ມີຄວາມສ່ຽງ. ອົງການຕ່າງໆອາດຍັງບໍ່ທັນໄດ້ເລືອກເຟັ້ນຕົວຊີ້ວັດການຄ້າມະນຸດຢ່າງເປັນລະບົບຕໍ່ກັບບັນດາຜູ້ທີ່ຖືກສົ່ງກັບຈາກປະເທດໄທ ແລະ ກັບອີກ 20 ຄົນທີ່ອອກຈາກລາວສົ່ງຄືນຫວຽດນາມໃນໄລຍະຂອງການລາຍງານ, ຊຶ່ງກໍ່ອາດພາໃຫ້ມີຜູ້ຖືກເຄາະຮ້າຍບາງຄົນບໍ່ໄດ້ຖືກລະບຸຕົວ. ເຈົ້າໜ້າທີ່ປະຕິບັດວຽກງານຢູ່ແນວໜ້າອາດຂາດຄວາມເຂົ້າໃຈທີ່ສ່ວນຫຼາຍນຳໄປສູ່ຄວາມສັບສົນລະຫວ່າງ ການຄ້າມະນຸດ ແລະ ການລັກລອບເຂົ້າເມືອງ, ຊຶ່ງອາດມີຜົນຕໍ່ການລົງໂທດຜູ້ຖືກເຄາະຮ້າຍແທນ. ລັດຖະບານໄດ້ລາຍງານຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຢູ່ພາຍໃນທີ່ລະບຸຕົວໄດ້ມີ 85 ຄົນ ເພີ່ມຈາກ 46 ຄົນໃນປີ 2015. ລັດຖະບານຍັງໄດ້ລາຍງານການຮັບເອົາຄົນລາວ 99 ຄົນທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດກັບຄືນຈາກປະເທດໄທ, ຈີນ ແລະ ອິນໂດເນເຊຍ ລວມທັງ 84 ຄົນເປັນຜູ້ຖືກເຄາະຮ້າຍຂາຍບໍລິການທາງເພດ ແລະ 15 ຄົນເປັນຜູ້ຖືກເຄາະຮ້າຍໂດຍການອອກແຮງງານທີ່ຂູດຮີດ, ທຽບໃສ່ຜູ້ຖືກເຄາະຮ້າຍ 143 ຄົນໃນປີຜ່ານມາ. ຜູ້ຖືກເຄາະຮ້າຍຢູ່ຕ່າງປະເທດສ່ວນຫຼາຍຖືກລະບຸຕົວໄດ້ໂດຍເຈົ້າໜ້າທີ່ຂອງປະເທດເພື່ອນບ້ານ. ບັນດາອົງການຈັດຕັ້ງສາກົນໄດ້ລາຍງານການພົບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນຄົນລາວຖືກຂູດຮີດໃນປະເທດຕ່າງໆ ແຕ່ມັນຍັງບໍ່ທັນຊັດເຈນຖ້າຕົວເລກດັ່ງກ່າວມີການເກັບເປັນສະຖິຕິຕົວເລກໂດຍພາກລັດບໍ່. ບັນດາອົງການທີ່ບໍ່ສັງກັດລັດພົບຄວາມຫຍຸ້ງຍາກໃນການຕິດຕໍ່ສະຖານທູດລາວ ແລະ ອຸປະທູດທີ່ຢູ່ຕ່າງປະເທດເພື່ອລາຍງານກໍລະນີການຄ້າມະນຸດ. ລັດຖະບານບໍ່ໄດ້ສະໜອງຂໍ້ມູນກ່ຽວກັບການບໍລິການໆປົກປ້ອງແກ່ບັນດາຜູ້ຖືກເຄາະຮ້າຍລວມທັງລາງວັນການເປັນພະຍານໃນສານ ຫຼື ສິ່ງກະຕຸກຊຸກຍູ້ອື່ນໆເພື່ອຊ່ວຍໃຫ້ຜູ້ຖືກເຄາະຮ້າຍມີສ່ວນຮ່ວມເຂົ້າໃນຂະບວນການຍຸຕິທຳທີ່ເປັນທາງການ ແລະ ຍັງສືບຕໍ່ເພິ່ງພາປະທດເພື່ອບ້ານໃນການລະບຸຕົວ

ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍອີງຕາມຂໍ້ມູນຈາກອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດ ແລະ ກະຊວງປ້ອງກັນຄວາມສະຫງົບ.

ຜູ້ຖືກເຄາະຮ້າຍອາດໄດ້ຮັບການຊ່ວຍເຫຼືອເຊັ່ນ: ທີ່ພັກຊົ່ວຄາວ, ຄໍາແນະນໍາທາງກົດໝາຍ, ການປິ່ນປົວ, ການສຶກສາ ຫຼື ຝຶກວິຊາຊີບ, ຊຶ່ງການບໍລິການສ່ວນຫຼາຍຖືກຊຸກຍູ້ ແລະ ສະໜອງທຶນໂດຍອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດ ແລະ ອົງການຈັດຕັ້ງສາກົນ, ເຖິງຢ່າງໃດກໍ່ຕາມ ລັດຖະບານຍັງບໍ່ທັນລາຍງານວ່າມີຜູ້ຖືກເຄາະຮ້າຍຈັກຄົນທີ່ໄດ້ຮັບປະໂຫຍດຈາກການບໍລິການດັ່ງກ່າວໃນໄລຍະຂອງການລາຍງານ. ລັດຖະບານໄດ້ຮ່ວມກັບຫຼາຍອົງການຈັດຕັ້ງສາກົນເພື່ອນໍາໃຊ້ສູນນໍາສົ່ງຜູ້ຖືກເຄາະຮ້າຍໃນນະຄອນຫຼວງວຽງຈັນ, ຊຶ່ງຜູ້ຖືກເຄາະຮ້າຍກັບຄືນຈາກປະເທດໄທອາດພັກຊົ່ວຄາວໄດ້ປະມານ 1 ອາທິດກ່ອນຈະມີການສົ່ງຄືນຊຸມຊົນບ້ານເກີດຂອງເຂົາເຈົ້າ. ສະຫະພັນແມ່ຍິງໄດ້ໃຫ້ທີ່ພັກຊົ່ວຄາວແກ່ຜູ້ຖືກເຄາະຮ້າຍພ້ອມທັງໃຫ້ການບໍລິການຕ່າງໆ. ເປັນເທື່ອທໍາອິດທີ່ກະຊວງປ້ອງກັນຄວາມສະຫງົບໄດ້ລາຍງານການຝຶກອົບຮົມວິທີລະບຸຕົວ ແລະ ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍແກ່ເຈົ້າໜ້າທີ່ຕໍາຫຼວດ 95 ທ່ານທີ່ຮັບຜິດຊອບຕ້ານການຄ້າມະນຸດຢູ່ໃນທົ່ວ 18 ແຂວງໃນເວລາຂອງການສ້າງບົດລາຍງານ. ເຈົ້າໜ້າທີ່ໄດ້ລາຍງານການເຮັດການສໍາພາດຜູ້ຖືກເຄາະຮ້າຍໃນທີ່ພັກຊົ່ວຄາວພ້ອມທັງຢູ່ຫ້ອງການສົ່ງຕໍ່ຜູ້ຖືກເຄາະຮ້າຍທີ່ຕັ້ງຢູ່ດ່ານສາກົນ ແຕ່ກໍ່ບໍ່ທັນຊັດເຈນວ່າການສໍາພາດດັ່ງກ່າວໄດ້ນໍາໄປສູ່ການລະບຸຕົວຜູ້ຖືກເຄາະຮ້າຍ ຫຼື ຍົກໃຫ້ເຫັນຄວາມພະຍາຍາມຂອງເຈົ້າໜ້າທີ່. ການຂາດເຂີນການຊຸກຍູ້ທີ່ພຽງພໍໃນໄລຍະຍາວຍ້ອນຊັບພະຍາກອນທີ່ມີຈໍາກັດພາໃຫ້ຜູ້ຖືກເຄາະຮ້າຍມີຄວາມສ່ຽງທີ່ຈະກັບມາຕົກເປັນເຫຍື່ອຂອງການຄ້າມະນຸດອີກ. ເຖິງວ່າຜູ້ຖືກເຄາະຮ້າຍສ່ວນຫຼາຍທີ່ລະບຸຕົວໄດ້ໃນປີ 2016 ຈະແມ່ນເພດຊາຍ ແລະ ກຸ່ມນີ້ມີຄວາມສ່ຽງສະເພາະທີ່ຈະເປັນເຫຍື່ອຂອງການຄ້າມະນຸດແບບໃຊ້ແຮງງານໃນຂະແໜງປະມົງ, ການບໍລິການສ່ວນຫຼາຍຈະມີສະເພາະແຕ່ແມ່ຍິງ.

**ການປ້ອງກັນ:**

ລັດຖະບານຍາມໃດກໍ່ມີຄວາມພະຍາຍາມປ້ອງກັນບັນຫາການຄ້າມະນຸດ. ລັດຖະບານໄດ້ຄຸ້ມຄອງສິ່ງພິມ, ໂທລະພາບ ແລະ ວິທະຍຸເພື່ອສົ່ງເສີມການປູກຈິດສໍານຶກໃນການຕ້ານການຄ້າມະນຸດພ້ອມການຊ່ວຍເຫຼືອຈາກຜູ້ໃຫ້ທຶນສາກົນ, ເຈົ້າໜ້າທີ່ໄດ້ແຈກຢາຍສິ່ງພິມກ່ຽວກັບອັນຕະລາຍຂອງການຄ້າ

ມະນຸດໃຫ້ອຳນາດການປົກຄອງຂັ້ນແຂວງ, ສະມາຊິກໃນຊຸມຊົນທ້ອງຖິ່ນ ແລະ ບັນດາກຸ່ມຈັດຕັ້ງທາງສັງຄົມ. ເຈົ້າໜ້າທີ່ໄດ້ແຈກຢາຍປະຕິທິນ 30,000 ສະບັບທີ່ກ່ຽວກັບການຄ້າມະນຸດ ໃຫ້ພື້ນທີ່ມີຄວາມສ່ຽງສູງໂດຍສະເພາະບໍລິເວນຊາຍແດນ. ຄວາມຫຼ້າຊ້າໃນການຮັບຮອງເອົາຮ່າງແຜນດຳເນີນງານສະບັບສຸດທ້າຍ 2016-2020 ອາດພາໃຫ້ຫຼ້າຊ້າໃນການປະສານງານຂອງບັນດາກະຊວງໃນການປ້ອງກັນບັນຫາການຄ້າມະນຸດ. ລັດຖະບານໄດ້ລາຍງານການສະໜອງທຶນໃຫ້ກິດຈະກຳຕ້ານການຄ້າມະນຸດຕາມງົບປະມານປະຈຳປີແຕ່ບໍ່ໄດ້ໃຫ້ຂໍ້ມູນສະເພາະກ່ຽວກັບວິທີການສະໜອງທຶນ. ຄະນະກຳມະການແຫ່ງຊາດວ່າດ້ວຍ ການຕ້ານການຄ້າມະນຸດໄດ້ສືບຕໍ່ກິດຈະກຳການປະສານງານ ແຕ່ຢ່າງໃດກໍ່ຕາມ ອົງການຈັດຕັ້ງທາງສັງຄົມລາຍງານການຂາດຄວາມໂປ່ງໃສຄຽງຄູ່ກັບການສ້າງແຜນ ແລະ ຊັບພະຍາກອນທີ່ອາດບໍ່ພຽງພໍ ໄດ້ເປັນສາເຫດກີດໜ່ວງການປະສານງານລະຫວ່າງກະຊວງທີ່ກ່ຽງຂ້ອງ ແລະ ຜູ້ຮ່ວມງານສາກົນ. ເຈົ້າໜ້າທີ່ອາດຮຽກຮ້ອງໃຫ້ອົງການຈັດຕັ້ງທີ່ບໍ່ສັງກັດລັດໄດ້ຮັບອານຸຍາດຈາກພາກລັດກ່ອນເຮັດກິດຈະກຳຕ້ານການຄ້າມະນຸດທັງໝົດ. ລັດຖະບານບໍ່ໄດ້ຝຶກອົບຮົມຕ້ານການຄ້າມະນຸດໃຫ້ແກ່ບຸກຄະລາກອນສະຖານທູດ ຫຼື ມີມາດຕະການໃນການຫຼຸດຜ່ອນຄວາມຕ້ອງການດ້ານແຮງງານທີ່ຖືກບັງຄັບ ຫຼື ການມີເພດສຳພັນທີ່ເປັນລັກສະນະການຄ້າ.

**ການເກັບຂໍ້ມູນດ້ານການຄ້າມະນຸດ:**

ດັ່ງທີ່ລາຍງານໃນໄລຍະ 5 ປີຜ່ານມາ ສປປ ລາວ ເປັນປະເທດຕົ້ນທາງ ຫຼື ອາດເປັນປະເທດທາງຜ່ານ ແລະ ປະເທດປາຍທາງສຳລັບແມ່ຍິງ, ເດັກນ້ອຍ ແລະ ຜູ້ຊາຍທີ່ເປັນເຫຍື່ອຂອງການຄ້າມະນຸດເພື່ອການມີເພດສຳພັນ ແລະ ເປັນແຮງງານທີ່ຖືກບັງຄັບ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດສ່ວນຫຼາຍຈະເປັນແຮງງານເຄື່ອນຍ້າຍທີ່ຊອກຫາໂອກາດທີ່ດີກວ່າຢູ່ນອກປະເທດ ເປັນຜູ້ທີ່ປະສົບກັບບັນຫາການຂູດຮີດແຮງງານ ຫຼື ກົດຂີ່ໃຫ້ມີເພດສຳພັນໃນປະເທດປາຍທາງຕ່າງໆ, ຊຶ່ງຜູ້ຖືກເຄາະຮ້າຍສ່ວນຫຼາຍມັກໄປປະເທດໄທ, ພ້ອມທັງຫວຽດນາມ, ມາເລເຊຍ, ຈີນ, ໄຕ້ຫວັນ ແລະ ຍີ່ປຸ່ນ. ບາງຄົນກໍ່ເຂົ້າເມືອງໂດຍການຊ່ວຍເຫຼືອຈາກນາຍໜ້າຜ່ານການເສຍຄ່າບໍລິການແຕ່ກໍ່ມີຫຼາຍຄົນທີ່ຂ້າມຊາຍແດນດ້ວຍຕົນເອງໂດຍມີເອກະສານຄົບຊຸດ. ຜູ້ຄ້າມະນຸດລວມທັງສາມະຊິກຄອບຄົວຜູ້ຖືກເຄາະຮ້າຍເອງສ່ວນຫຼາຍ

ຈະຢູ່ໃນຊຸມຊົນໆນະບົດບ່ອນທີ່ເຂົາເຈົ້າຕົວະຜູ້ຖືກເຄາະຮ້າຍໂດຍການສັນຍາທີ່ບໍ່ມີຕົວຈິງເພື່ອໄປເຮັດວຽກຖືກກົດໝາຍຢູ່ຕ່າງປະເທດ.

ຈຳນວນຜູ້ຖືກເຄາະຮ້າຍສ່ວນຫຼາຍເປັນແມ່ຍິງ ແລະ ເດັກຍິງມັກຈະຖືກກົດຂີ່ຢູ່ປະເທດໄທເພື່ອຂາຍບໍລິການທາງເພດທີ່ເປັນອຸດສາຫະກຳ ແລະ ເປັນແຮງງານຖືກບັງຄັບໃນການບໍລິການພາຍໃນ, ໂຮງງານ ຫຼື ພາກກະສິກຳ. ຜູ້ຊາຍ ແລະ ເດັກຊາຍຈະເປັນຜູ້ຖືກເຄາະຮ້າຍຈາກການເປັນແຮງງານຖືກບັງຄັບໃນຂະແໜງປະມົງ, ກໍ່ສ້າງ ແລະ ອຸດສາຫະກຳກະສິກຳໃນປະເທດໄທ. ຄົນລາວທີ່ເປັນຜູ້ຖືກເຄາະຮ້າຍຈາກການເປັນແຮງງານຖືກບັງຄັບໃນອຸດສາຫະກຳປະມົງຂອງປະເທດໄທຖືກລະບຸຕົວໄດ້ໃນໜ້ານໍ້າທະເລຂອງປະເທດອິນໂດເນເຊຍ. ອົງການຈັດຕັ້ງທີ່ບໍ່ສັງກັດລັດລາຍງານວ່າ ມີກຸ່ມຄົນສະເໜີການບໍລິການຂົນສົ່ງໄກ້ຊາຍແດນໄທອຳນວຍຄວາມສະດວກໃນການຈັດສົ່ງແຮງງານເຄື່ອນຍ້າຍໄປເປັນແຮງງານຖືກບັງຄັບ ຫຼື ຂາຍບໍລິການທາງເພດໃນປະເທດໄທ. ຜູ້ຄ້າມະນຸດທີ່ເປັນຄົນຕ່າງປະເທດໄດ້ຮ່ວມກັບຄົນກາງທີ່ເປັນຄົນລາວອຳນວຍຄວາມສະດວກໃນການຄ້າມະນຸດ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຫຼາຍຄົນອາດເປັນບຸກຄົນທີ່ຢູ່ໃນກຸ່ມແຮງງານເຄື່ອນຍ້າຍຫຼາຍກວ່າ 10,000 ຄົນທີ່ຖືກສົ່ງຕົວກັບ ຫຼື ຖືກພັກດັນໃຫ້ກັບປະເທດຈາກປະເທດໄທໃນແຕ່ລະປີໂດຍບໍ່ມີໜັງສືທາງການ, ສ່ວນຫຼາຍຜ່ານການຂີ່ເຮືອຂ້າມນໍ້າຂອງ. ເຈົ້າຂອງລົດບາງຄັ້ງລັດທາງຂອງແຮງງານເຄື່ອນຍ້າຍເມື່ອກຳລັງເດີນທາງກັບລາວ ແລະ ອຳນວຍຄວາມສະດວກໃຫ້ເຂົາເຈົ້າກັບຄືນສູ່ບັນຫາການຄ້າມະນຸດອີກ. ມີຜູ້ຍິງ ແລະ ເດັກຍິງບາງຄົນຈາກລາວຖືກຂາຍເປັນເຈົ້າສາວໃນປະເທດຈີນແລ້ວໄປເປັນການຄ້າມະນຸດເພື່ອຂາຍບໍລິການທາງເພດອີງຕາມການລາຍງານຂອງ ສປຊ ສິ່ງນີ້ເປັນທ່າອ່ຽງທີ່ອາດຍົກໃຫ້ເຫັນໃນເວລາສ້າງບົດລາຍງານຍ້ອນການເພີ່ມຂຶ້ນຫຼາຍຂອງຜູ້ຊາຍຄົນຈີນທີ່ຈົດທະບຽນການແຕ່ງງານກັບແມ່ຍິງລາວໃນ 2016. ເຈົ້າໜ້າທີ່ທ້ອງຖິ່ນບາງຄົນຖືກລາຍງານວ່າມີສ່ວນກ່ຽວຂ້ອງກັບຄວາມສ່ຽງໃຫ້ເກີດການຄ້າມະນຸດໂດຍຮັບເອົາການຈ່າຍເງິນເພື່ອອຳນວຍຄວາມສະດວກໃຫ້ມີການເຄື່ອນຍ້າຍຂ້າມແດນ ຫຼື ການຂົນສົ່ງເດັກຍິງເຂົ້າໄປຈີນ.

ປະເທດລາວຮັບການລາຍງານວ່າເປັນປະເທດທາງຜ່ານຂອງແມ່ຍິງ ແລະ ເດັກຍິງຄົນຫວຽດນາມ ແລະ ຈີນຜູ້ທີ່ເປັນເຫຍື່ອຂອງການຄ້າມະນຸດທີ່ເປັນການຂາຍບໍລິການທາງເພດ ແລະ ການເປັນແຮງງານຖືກບັງຄັບໃນປະເທດເພື່ອນບ້ານໂດຍສະເພາະປະເທດໄທ. ອົງການຈັດຕັ້ງພາຍໃນລາຍງານບາງບັນຫາທີ່

ໜ້າເປັນຫ່ວງ ວ່າຜູ້ຊາຍ ແລະ ແມ່ຍິງຄົນຫວຽດນາມທີ່ເຮັດວຽກໃນ ຫຼື ບໍລິເວນທີ່ມີການຕັດໄມ້ ແລະ ການກໍ່ສ້າງ (ສ່ວນຫຼາຍຜິດກົດໝາຍ) ລຽບຕາມຊາຍແດນລາວຫວຽດ ອາດເປັນຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ. ເຂົາເຈົ້າລາຍງານບັນຫາທີ່ຄ້າຍຄືກັນກັບຄົນສັນຊາດມຽນມາທີ່ເຮັດວຽກເປັນກຳ ມະກອນ ຫຼື ກ່ຽວຂ້ອງກັບການຂາຍບໍລິການທາງເພດໃກ້ບໍລິເວນສາມຫຼ່ຽມທອງຄຳທີ່ເປັນຮອຍຕໍ່ ລະຫວ່າງປະເທດລາວ, ມຽນມາ ແລະ ໄທ.

ຂໍ້ມູນຍັງມີໜ້ອຍຫຼາຍກ່ຽວກັບຂອບເຂດການຄ້າມະນຸດຢູ່ໃນ ສປປ ລາວ. ອົງການຈັດຕັ້ງສາກົນໄດ້ ລາຍງານຕົວເລກແຮງງານເຄື່ອນຍ້າຍທີ່ມີຫຼາຍໃນເຂດເສດຖະກິດພິເສດ ຫຼື ສະເພາະທີ່ບໍ່ມີການ ບັນທຶກເອກະສານ ອາດມີຄວາມສ່ຽງຕໍ່ການຄ້າມະນຸດ ຫຼື ຖືກຂູດຮີດທາງແຮງງານ. ຜູ້ຍິງ ແລະ ເດັກນ້ອຍບາງຄົນທີ່ເປັນຄົນຫວຽດນາມ, ຈີນ ແລະ ລາວ ອາດເປັນເຫຍື່ອຂອງການຄ້າມະນຸດທີ່ເປັນ ການຂາຍບໍລິການທາງເພດໃນປະເທດທີ່ສ່ວນຫຼາຍຈະເກີດໃນຕົວເມືອງໃຫຍ່ ຫຼື ໃນບໍລິເວນທີ່ໃກ້ກັບ ຊາຍແດນ, ຄາສິໂນ, ເຂດເສດຖະກິດພິເສດ ທີ່ມີລາຍງານໃນການຕອບສະໜອງຄວາມຕ້ອງການຂອງ ນັກທ່ອງທ່ຽວອາຊີ ແລະ ແຮງງານເຄື່ອນຍ້າຍ. ຊາວໜຸ່ມ ແລະ ເດັກນ້ອຍຄົນລາວອາດຕົກເປັນແຮງ ງານຖືກບັງຄັບໃນຂະແໜງກະສິກຳພາຍໃນ ສປປ ລາວ. ປະຊາກອນໃນເຂດບ້ານທີ່ຖືກຍົກຍ້າຍຍ້ອນ ການກໍ່ສ້າງເຂື່ອນ ແລະ ໂຄງການໂຄງລ່າງພື້ນຖານຂະໜາດໃຫຍ່ຕ່າງໆອາດມີຄວາມສ່ຽງສູງ. ບົດລາຍ ງານຕ່າງໆຍົກໃຫ້ເຫັນບັນຫານັກທ່ອງທ່ຽວທີ່ມັກໃຊ້ບໍລິການທາງເພດຂອງເດັກນ້ອຍ ມາຈາກລາຊະ ອານາຈັກອັງກິດ, ອິດສະຕາລີ ແລະ ສະຫະລັດອາເມກາ ເດີນທາງເຂົ້າປະເທດລາວເພື່ອຈຸດປະສົງການ ຂູດຮີດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນການບໍລິການທາງເພດຂອງເດັກນ້ອຍ.